ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ກະຊວງການເງິນ

ເລກທີ 2433/ກງ.

ນະຄອນຫລວງວຽງຈັນ,ວັນທີ 22 AUG 2013

## ແຈ້ງການ

## ຂອງລັດຖະມົນຕີວ່າການກະຊວງການເງິນ

ເຖິງ : ທ່ານຫົວໜ້າກົມສ່ວຍສາອາກອນ, ບັນດາທ່ານຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ ແລະ ນະຄອນຫລວງວຽງຈັນ.

ເລື່ອງ : ຢຸດຕິການປະຕິບັດຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1766/ກງ, ລົງວັນທີ 05/07/2013.

ຜ່ານການອອກຄຳສັ່ງແນະນຳກ່ຽວກັບການເພີ່ມທະວີການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນຈາກຍານພາຫະນະ ສະບັບເລກທີ 1766/ກງ, ລົງວັນທີ 05/07/2013 ມາໄດ້ໄລຍະໜຶ່ງ ກະຊວງການເງິນ ໄດ້ຮັບຟັງຄຳຄິດຄຳເຫັນຈາກທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ນຳມາຄົ້ນຄວ້າແລ້ວ ເຫັນວ່າບໍ່ສາມາດປະຕິບັດໄດ້ເນື່ອງຈາກບໍ່ມີເວລາພຽງພໍ ສຳລັບການກຽມຄວາມພ້ອມປະຕິບັດ, ກະຊວງການເງິນຈຶ່ງອອກແຈ້ງການດັ່ງນີ້:

1. ໃຫ້ຢຸດຕິການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 1766/ກງ, ລົງວັນທີ 05/07/2013 ກ່ຽວກັບການເພີ່ມທະວີການຄຸ້ມຄອງເກັບອາກອນຈາກຍານພາຫະນະທຸກປະເພດ;

2. ເລີ່ມແຕ່ເດືອນ ມັງກອນ 2014 ເປັນຕົ້ນໄປກະຊວງການເງິນຈະໄດ້ປະຕິບັດການຄຸ້ມຄອງເກັບອາກອນພາຫະນະແບບເອເລັກໂທຣນິກ; ແຕ່ນີ້ຮອດທ້າຍປີ 2013 ແມ່ນໄລຍະກະກຽມຄວາມພ້ອມ ສຳລັບການຈັດຕັ້ງປະຕິບັດລະບົບດັ່ງກ່າວ; ໃນໄລຍະກະກຽມຄວາມພ້ອມປະຕິບັດລະບົບໃໝ່ນີ້, ການຈັດເກັບພາສີ-ອາກອນ ຈາກການນຳເຂົ້າຍານພາຫະນະ ໃຫ້ສືບຕໍ່ຈັດຕັ້ງປະຕິບັດຕາມລະບົບທີ່ເຄີຍປະຕິບັດຜ່ານມາ (ນຳໃຊ້ລາຄາກາງເປັນພື້ນຖານຄິດໄລ່ພາສີ-ອາກອນ);

3. ມອບໃຫ້ກົມສ່ວຍສາອາກອນ, ພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ ປະຕິບັດ ແລະ ແຈ້ງໃຫ້ຜູ້ປະກອບການດ້ານພາຫະນະຮັບຊາບໂດຍທົ່ວເຖິງກັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ

ສຳເນົາສົ່ງ :

- ທ່ານນາຍົກ-ຮອງນາຍົກ 05 ສະບັບ
- ທ່ານຫົວໜ້າຫ້ອງວ່າການສູນກາງພັກ 01 ສະບັບ
- ທ່ານຫົວໜ້າຫ້ອງວ່າການລັດຖະບານ 01 ສະບັບ
- ກົມສ່ວຍສາອາກອນ 01 ສະບັບ
- ພະແນກງານເງິນແຂວງ ແລະ ນະຄອນຫຼວງວຽງຈັນ 17 ສະບັບ
- ພະແນກສ່ວຍສາອາກອນແຂວງ ແລະ ນະຄອນຫລວງ 17 ສະບັບ
- ສຳເນົາ 01 ສະບັບ